**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.**

# ຄູ່ມື

# ການຂໍຢັ້ງຢືນກະສິກຳ ອິນຊີຂອງລາວ.

**ກົມປູກຝັງ, ພະແນກມາດຕະຖານ**

**ນະຄອນຫລວງວຽງຈັນ, ສິງຫາ 2011**

## ຄຳນຳ

ເພື່ອຜັນຂະຫຍາຍ ນະໂຍບາຍຂອງພັກ ວ່າດ້ວຍການຜະລິດ ກະສິກຳ ສະອາດ, ແຜນງານ ຜະລິດພືດສະບຽງ ແລະ ພືດເປັນສິນຄ້າ ຂອງຂະແໜງການກະສິກຳ ແລະ ປ່າໄມ້, ກົມປູກຝັງ ໄດ້ພະຍາຍາມສ້າງບັນດານິຕິກຳ ແລະ ລະບຽບການຕ່າງໆ ເພື່ອເປັນບ່ອນອີງໃຫ້ແກ່ ພາກສ່ວນຕ່າງໆ ນຳໃຊ້ເປັນບ່ອນອີງ ໃນການຈັດຕັ້ງປະຕິບັດ.

ຄູ່ມື ການຂໍຢັ້ງຢືນກະສິກຳອິນຊີ ຂອງລາວ ໄດ້ສ້າງຂຶ້ນມາເພື່ອເປັນຄູ່ມື ແນະນຳ ແລະ ເປັນສິ່ງອຳນວຍຄວາມສະດວກ ໃຫ້ແກ່ ຜູ້ຜະລິດ - ຜູ້ປະກອບເອກະສານ ຜູ້ທີ່ມີຄວາມສົນໃຈ ທີ່ຈະຂໍການຢັ້ງຢືນກະສິກຳອິນຊີ ຕະຫລອດເຖິງ ສ້າງຄວາມສະດວກໃຫ້ແກ່ນັກວິຊາການ ໃນການຮັບສະໝັກການຂໍ ການຢັ້ງຢືນຂອງ ຜູ້ຜະລິດ - ຜູ້ປະກອບການ ເຮັດໃຫ້ການ ຂໍການຢັ້ງຢືນ ເປັນໄປຕາມຂັ້ນຕອນ, ມີຄວາມສະດວກ, ງ່າຍດາຍ, ບໍ່ສັບສົນ ແລະ ປະຢັດເວລາ ແລະ ທັງເປັນການສົ່ງເສີມ ໃຫ້ມີການ ຂໍການຢັ້ງຢືນຈາກຜູ້ຜະລິດ - ຜູ້ປະກອບການເພີ່ມຂຶ້ນ.

ປຶ້ມຄູ່ມືສະບັບນີ້ ໄດ້ຮຽບຮຽງ ແລະ ພັດທະນາມາຈາກ ບົດຮຽນຕົວຈິງ ແລະ ເອກະສານອ້າງອີງຈາກແຫລ່ງຕ່າງໆ. ດັ່ງນັ້ນ, ກົມປູກຝັງຫວັງຢ່າງຍິ່ງວ່າຄູ່ມື ສະບັບນີ້ ຈະອຳນວຍຄວາມສະດວກໃນທາງປະຕິບັດ ໃຫ້ແກ່ ກຸ່ມຜູ້ຜະລິດ ແລະ ຜູ້ປະກອບການນຳໄປ ໝູນໃຊ້ເພື່ອຂໍການຢັ້ງຢືນກະສິກຳ ອິນຊີ.

ປຶ້ມຄູ່ມືສະບັບນີ້ໄດ້ຈັດພິມເປັນຄັ້ງທຳອິດ. ດັ່ງນັ້ນ, ຈິ່ງປາສະຈາກບໍ່ໄດ້ ຂໍ້ຂາດຕົກບົກຜ່ອງ ດ້ານຕ່າງໆ. ຊຶ່ງກົມປູກຝັງ ພ້ອມຍອມຮັບ ຄຳຕຳນິຊິຊົມ ເພື່ອເອົາມາປັບປຸງແກ້ ໄຂເຮັດໃຫ້ປຶ້ມຄູ່ມືຫົວນີ້ ມີເນື້ອໃນຄົບຖ້ວນ ແລະ ສົມບູນຂຶ້ນເລື້ອຍໆ

ຫົວໜ້າກົມປູກຝັງ

ດຣ. ມົນທາທິບ ຈັນເພັງໄຊ

1. **ຂອບເຂດໃບຢັ້ງຢືນກະສິກຳ ອິຊີ**

   ຂອບເຂດໃບຢັ້ງຢືນກະສິກຳອິນຊີຂອງ ສປປ ລາວ ປະກອບດ້ວຍ 3 ມາດຕະຖານ ຄື:

   1. ການອອກໃບຢັ້ງຢືນມາດຕະຖານການຜະລິດພືດ
   2. ການອອກໃບຢັ້ງຢືນມາດຕະຖານການປຸງແຕ່ງ ແລະ ຫລັງການເກັບກ່ຽວ
   3. ການອອກໃບຢັ້ງຢືນມາດຕະຖານການເກັບຜົນຜະລິດຈາກປ່າ

2. **ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈຸດປະສົງຂໍການຢັ້ງຢືນ. ຂັ້ນຕອນຂໍການຢັ້ງຢືນ ປະກອບມີດັ່ງນີ້:**

**2.1 ການຂຽນໃບສະໝັກ ແລະ ຍື່ນໃບສະໝັກ.**

ຜູ້ສະໝັກ ຕ້ອງປະກອບຂໍ້ມູນ ໃຫ້ຄົບຖ້ວນ, ຖືກຕ້ອງ ແລະ ຊັດເຈນ ກັບຄວາມເປັນຈິງ ໃສ່ແບບຟອມການສະມັກ ຂໍການຢັ້ງຢືນກະສິກຳ ອິນຊີລາວ.

ແບບຟອມການສະມັກຂໍການຢັ້ງຢືນກະສິກຳອິນຊີລາວ ປະກອບມີ 2 ແບບຟອມຄື: (1) ແບບຟອມການສະມັກຂໍການຢັ້ງຢືນຟາມ ແລະ (2) ແບບຟອມການສະມັກຂໍ ການຢັ້ງຢືນການປຸງແຕ່ງ.

ໃນກໍລະນີທີ່ ທ່ານສະໝັກ ຂໍການຢັ້ງຢືນທັງຟາມ ແລະ ການປຸງແຕ່ງ, ສາມາດຂຽນໃສ່ແບບຟອມ ຂໍການຢັ້ງຢືນກະສິກຳ ອິນຊີ.

**2.2 ການຂໍຖອນໃບສະໝັກ.**

ໃນກໍລະນີທີ່ຜູ້ສະໝັກ ສົ່ງໃບສະໝັກ ແລະ ຊຳລະຄ່າທຳນຽມ ພື້ນຖານ ໃຫ້ໜ່ວຍງານອອກໃບຢັ້ງຢືນແລ້ວ ແຕ່ຕ້ອງການຂໍຖອນໃບສະໝັກ ອອກຈາກການ ສະໝັກ ຫລື ຕໍ່ອາຍຸມີຂໍ້ປະຕິບັດດັ່ງນີ້:

- ການຖອນໃບສະໝັກຕ້ອງ ແຈ້ງເປັນລາຍລັກອັກສອນ ໃຫ້ໜ່ວຍງານອອກໃບຢັ້ງຢືນ ແລະ ຄ່າໃຊ້ຈ່າຍ ທີ່ຜູ້ສະໝັກ ຈ່າຍໃຫ້ກັບ ໜ່ວຍງານອອກໃບຢັ້ງຢືນ ໄປແລ້ວ ຈະບໍ່ໄດ້ຈ່າຍຄືນ ໃນທຸກກໍລະນີ.

3. **ປະເພດການສະໝັກຂໍການຢັ້ງຢືນກະສິກຳອິນຊີ.**

ການສະໝັກຂໍຢັ້ງຢືນກະສິກຳອິນຊີ ແບ່ງອອກເປັນ 4 ປະເພດຕາມຫລັກການຜະລິດ ແລະ ການປະກອບການຄື:

| ປະເພດການສະໝັກ | ຜູ້ສະໝັກ | ລາຍການຍັ້ງຢືນ |
|---|---|---|
| 1. ການຂໍຍັ້ງຢືນຟາມ | ຜູ້ຜະລິດ ຫລື ຜູ້ປະກອບການ ທີ່ເຮັດຟາມ ກະສິກຳອິຊີ | • ຟາມແລະຜົນຜະລິດໃນຟາມ<br>• ການບັນຈຸຜົນຜະລິດກະສິກຳອິນຊີ<br>• ການປຸ່ງແຕ່ງໃນຄອບຄົວ ຫລື ການປຸ່ງແຕ່ງຂະໜາດນ້ອຍ ໃຊ້ຜົນຜະລິດກະສິກຳ ອິນຊີ ຈາກຟາມຕົນເອງ. |
| 2. ການຂໍຍັ້ງຢືນການປຸງແຕ່ງ | ຜູ້ຜະລິດ ຫລື ຜູ້ປະກອບການ ທີ່:<br>• ປຸງແຕ່ງຜົນຜະລິດ ກະສິກຳອິນຊີ ຂອງຕົນ.<br>• ປຸງແຕ່ງ ນຳຜົນຜະລິດກະສິກຳ ອິນຊີ ຂອງຜູ້ອື່ນ ຫລື ເປັນສ່ວນປະສົມ ໃນການປຸງແຕ່ງ.<br>• ເກັບຊື້ຜົນຜະລິດສະກິກຳ ອິນຊີ ມາເຮັດການບັນຈຸ ໃໝ່ ແລະ ຈຳໜ່າຍ. | • ການປຸງແຕ່ງ<br>• ຜະລິດຕະພັນຈາກການປຸງແຕ່ງ<br>• ການບັນຈຸ |
| 3. ການຂໍຍັ້ງຢືນແບບກຸ່ມ | ກຸ່ມຜູ້ຜະລິດ ຫລື ຜູ້ປະກອບການທີ່:<br>• ເຮັດການຜະລິດກະສິກຳອິນຊີ ແລະ ມີການປຸງແຕ່ງ ຜົນຜະລິດ ເພື່ອຈຳໜ່າຍ ຮ່ວມກັນ. | • ການປຸງແຕ່ງ<br>• ຜະລິດຕະພັນຈາກການປຸງແຕ່ງ<br>• ການບັນຈຸ |
| 4. ການຂໍຍັ້ງຢືນຜົນຜະລິດຈາກປ່າ | ເປັນສະມາຊິກໃນບ້ານ ຫລື ກຸ່ມ ຄຸ້ມຄອງ ແລະ ນຳໃຊ້ທີ່ຈະເຮັດການເກັບກູ້ ເຄື່ອງປ່າຂອງດົງ | • ຜົນຜະລິດຈາກປ່າ<br>• ການບັນຈຸ<br>• ການປຸ່ງແຕ່ງ ໃນຄອບຄົວ ຫລື ການປຸ່ງແຕ່ງເປັນກຸ່ມ. |

ນອກຈາກ ການສະໝັກ ຂໍການຢັ້ງຢືນ ກະສິກໍາອິນຊີ ຂ້າງເທິງນັ້ນແລ້ວ ທາງໜ່ວຍງານ ອອກໃບຢັ້ງຢືນ ຍັງມີການບໍລິການເພີ່ມເຕີມຄື:

- ການບໍລິການເພື່ອສົ່ງອອກ.

  ໜ່ວຍງານອອກໃບຢັ້ງຢືນ ສາມາດ ອໍານວຍ ຄວາມສະດວກ ແລະ ການຕິດຕໍ່ປະສານງານ ກັບ ອົງການກວດກາການຢັ້ງຢືນ ສາກົນ ໂດຍຜ່ານອົງການ ກວດກາການຢັ້ງຢືນ ເປັນສະມາຊິກຢູ່ ເຊັ່ນ: ທ່ານສາມາດສົ່ງໄປ ປະເທດ ເອີລົບ, ສະຫະລັດອາເມລິການ ແລະ ປະເທດ ຍີ່ປຸ່ນ.

- ການຢັ້ງຢືນປັດໄຈການຜະລິດກະສິກໍາອິນຊີ.

  ໜ່ວຍງານອອກໃບຢັ້ງຢືນ ສາມາດອອກໃບຢັ້ງຢືນປັດໃຈການຜະລິດທີ່ມີຊື່ການຄ້າ ແລະ ຕ້ອງການ ນໍາໄປຈັດຈໍາໜ່າຍ ໃຫ້ແກ່ຜູ້ຜະລິດ ພາຍໃຕ້ ການຢັ້ງຢືນ ຂອງໜ່ວຍງານອອກໃບຢັ້ງຢືນ.

## 4. ເງື່ອນໄຂທີ່ຕ້ອງປະຕິບັດ ສໍາລັບຜູ້ຜະລິດ ແລະ ຜູ້ປະກອບການ.

ຜູ້ຜະລິດ-ຜູ້ປະກອບການ ສະມັກຂໍການຢັ້ງຢືນ ກະສິກໍາອິນຊີ ນໍາໜ່ວຍງານ ອອກໃບຢັ້ງຢືນ ຕ້ອງປະຕິບັດຕາມເງື່ອນໄຂ ຕ່າງໆດັ່ງນີ້:

- ຕ້ອງເຮັດບົດບັນທຶກ ການຊື້, ການນໍາໃຊ້ ປັດໃຈການຜະລິດ, ບັນຊີ ຊື້-ຂາຍ ຜົນຜະລິດອິນຊີ ພ້ອມທັງ ເກັບຮັກສາເອກະສານ ຊື້-ຂາຍ ຜົນຜະລິດ (ໃບຮັບເງິນ ແລະ ເອກະສານຕ່າງໆ)
- ຕ້ອງເຮັດບົດບັນທຶກ ບັນຊີ ການຊື້ວັດຖຸດິບ, ການຂາຍຜົນຜະລິດ ແລະ ເອກະສານການຜະລິດ,
- ຕ້ອງຍິນຍອມໃຫ້ນັກກວດກາ ເຂົ້າກວດກາໃນພື້ນທີ່ ທັງໝົດ ທີ່ຢູ່ໃນການຄອບຄອງ ຂອງຕົນ (ທັງພື້ນທີ່ເປັນຂອງຕົນເອງ, ເຊົ່າ, ໃຫ້ເຊົ່າ) ລວມທັງ ສະຖານທີ່ປະກອບການ ( ທີ່ຂໍການຢັ້ງຢືນ ແລະ ບໍ່ຂໍການຢັ້ງຢືນ) ຕະຫລອດຮອດ ສະຖານທີເກັບເຄື່ອງມື, ສະຖານທີ່ເກັບຜົນຜະລິດ, ສະຖານທີ່ເກັບວັດຖຸດິບ ແລະ ທີ່ພັກ ໂດຍໜ່ວຍງານອອກໃບຢັ້ງຢືນ ບໍ່ຈໍາເປັນຕ້ອງແຈ້ງໃຫ້ຮູ້ ລ່ວງໜ້າ.
- ຕ້ອງແຈ້ງໃຫ້ໜ່ວຍງານອອກໃບຢັ້ງຢືນ ຊາບທັນທີ ຖ້າມີການປ່ຽນແປງ ໃດໆ ເກີດຂຶ້ນໃນການຜະລິດ ເຊັ່ນ: ຊະນິດພືດ ທີ່ປູກ ແລະ ສະຖານ ທີ່ປະກອບການ.

- ຕ້ອງປະຕິບັດ ຕາມຂໍ້ກຳນົດ ແລະ ເງື່ອນໄຂ ອື່ນໆ ທີ່ທາງໜ່ວຍງານອອກໃບຢັ້ງຢືນ ວາງອອກ.

## 5. ການກວດກາຟາມ ແລະ ສະຖານທີ່ປະກອບການ.

### 5.1. ນັກກວດກາ

ນັກກວດກາ ແມ່ນເຈົ້າໜ້າທີ່ ທີ່ໄດ້ຮັບ ການຝຶກອົບຮົມ ດ້ານວິຊາສະເພາະ ທີ່ກ່ຽວຂ້ອງ, ມີຄວາມຮູ້ ແລະ ຄວາມຊຳນານດ້ານການຜະລິດ ກະສິກຳ ອິນຊີ ແລະ ໄດ້ຂຶ້ນທະບຽນ ເປັນຜູ້ກວດກາ ຂອງໜ່ວຍງານອອກໃບຢັ້ງຢືນ.

ນັກກວດກາ ມີໜ້າທີ່ກວດກາສະຖານທີ່ ເຮັດການຜະລິດ ແລະ ສະຖານທີ່ ປະກອບການ ຕາມທີ່ລະບຸ ໃນເອກະສານ (ໃບສະໝັກ/ໃບຈຕໍ່ອາຍຸ) ພ້ອມທັງກວດກາການເຮັດວຽກ ແລະ ວິທີການປະຕິບັດ ຕ່າງໆ ຂອງຜູ້ຜະລິດ-ຜູ້ປະກອບການ.

ໜ່ວຍງານອອກໃບຢັ້ງຢືນ ຈະເປັນຜູ້ຮັບຜິດຊອບ ຄ່າໃຊ້ຈ່າຍຕ່າງໆ ຂອງ ນັກກວດກາ. ນັກກວດກາ ບໍ່ມີສິດໃນການຮຽກຮ້ອງຄ່າໃຊ້ຈ່າຍໃດໆ ຈາກຜູ້ຜະລິດ-ຜູ້ປະກອບການ ລວມທັງບໍ່ອະນຸຍາດໃຫ້ ນັກກວດກາການຮັບຂອງຂັວນ ຫລື ສິ່ງທີ່ມີມູນຄ່າ ຈາກຜູ້ຜະລິດ-ຜູ້ປະກອບການ.

ໃນກໍລະນີ ນັກກວດກາໄດ້ມີພຶດຕິກຳທີ່ບໍ່ເໝາະສົມ ຜູ້ຜະລິດ-ຜູ້ປະກອບການ ສາມາດສະເໜີ ຕໍ່ໜ່ວຍງານ ອອກໃບຢັ້ງຢືນ.

### 5.2 ປະເພດການກວດກາ

ການກວດກາ ແບ່ງອອກເປັນ 3 ປະເພດ:

1. ການກວດກາຄັ້ງທຳອິດ (Initial Inspection) ແມ່ນການກວດກາ ສະຖານທີການຜະລິດ ແລະ ສະຖານທີ່ ປະກອບການ ເພື່ອປະເມີນຜົນ ການປະຕິບັດງານ ຂອງຜູ້ຜະລິດ-ຜູ້ປະກອບການ. ການກວດກາຄັ້ງທຳອິດດ ຈະມີການນັດໝາຍລ່ວງໜ້າ ແລະ ຜູ້ຜະລິດ-ຜູ້ປະກອບການ ຫລື ຜູ້ຮັບຜິດຊອບ ຕ້ອງຢູ່ປະຈຳພື້ນທີ່ ເພື່ອພົບນັກກວດກາ.
2. ການກວດກາປະຈຳປີ (Annual Inspection) ແມ່ນການກວດກາ ສະຖານທີ່ ການຜະລິດ ແລະ ສະຖານທີການປະກອບການ ຊຶ່ງເກີດຂຶ້ນ ປີລະໜຶ່ງຄັ້ງ ແລະ ມີການແຈ້ງໃຫ້ ຜູ້ຜະລິດ-ຜູ້ປະກອບການຮູ້ລ່ວງໜ້າ.
3. ການກວດກາພິເສດ ແມ່ນການກວດກາ ນອກເໜືອຈາກການກວດກາປະຈຳປີ ຊຶ່ງງເກີດຂຶ້ນຍ້ອນ:

- ຄະນະກໍາມະການ ພິຈາລະນາ ອອກໃບຢັ້ງຢືນກໍານົດເງື່ອນໄຂຂື້ນມາ.
- ມີການສະເໜີ (ຮ້ອງຟ້ອງ) ຫລື ຂ່າວລື ແລະ ຂໍ້ສົງໃສ
- ມີການສະເໜີ ພິຈາລະນາ ຜົນການຢັ້ງຢືນ ຄືນໃໝ່
- ມີຄວາມສະຫຼັບຊັບຊ້ອນ ຂອງການຜະລິດ ແລະ ປະລິມານ ການຜະລິດ.
- ຄວາມສ່ຽງໃນການປົນເປື້ນ ຈາກການຜະລິດ ແລະ ການປຸງແຕ່ງ ລະຫ່ວາງການຜະລິດ ກະສິກໍາອິນຊີ ແລະ ກະສິກໍາເຄມີ.

*ການກວດກາພິເສດແບ່ງອອກເປັນປະເພດຕ່າງໆດັ່ງນີ້:*

- **ການຕິດຕາມການກວດກາ** (Follow-up Inspection) ແມ່ນການຕິດຕາມ ພາຍຫລັງການກວດກາປະຈໍາປີ ເພື່ອແນ່ໃຈວ່າ ຜູ້ຜະລິດ-ຜູ້ປະກອບການ ໄດ້ປະຕິບັດຕາມເງື່ອນໄຂ ທີ່ຄະນະກໍາມະການພິຈາລະນາອອກໃບຢັ້ງຢືນ ກໍານົດຂື້ນມາ. ສໍາລັບຄ່າໃຊ້ຈ່າຍທັງໝົດ ແມ່ນຜູ້ຜະລິດ ແລະ ຜູ້ປະກອບການ ເປັນຜູ້ຮັບຜິດຊອບ.
- **ການຕິດຕາມການກວດກາ ຕາມຂໍ້ຮ້ອງຮຽນ ແລະ ຂໍ້ສົງໃສ** (Follow-up Inspection on complaints and suspicious) ແມ່ນການກວດກາ ເພື່ອພິສູດຂໍ້ຮ້ອງຮຽນ ຫລື ຂໍ້ສົງໃສ ທີ່ມີຕໍ່ຜູ້ຜະລິດ-ຜູ້ປະກອບການ, ການກວດ ປະເພດນີ້ ຈະບໍ່ໄດ້ແຈ້ງ ໃຫ້ຜູ້ຜະລິດ-ຜູ້ປະກອບການ, ການກວດກາ ປະເພດນີ້ ຈະບໍ່ໄດ້ແຈ້ງ ໃຫ້ຜູ້ຜະລິດ-ຜູ້ປະກອບການ ຮູ້ລ່ວງໜ້າ ແລະ ໜ່ວຍງານອອກໃບຢັ້ງຢືນ ຈະເປັນຜູ້ ຮັບຜິດຊອບຄ່າໃຊ້ຈ່າຍ ໃນການກວດກາ, ແຕ່ພາຍຫລັງການກວດກາແລ້ວ ພົບວ່າ ຜູ້ຜະລິດ-ຜູ້ປະກອບການ ໄດ້ລະເມີດມາດຕະຖານ ຫລື ຂໍ້ກໍານົດ ຕາມທີ່ລະບຸ ໃນຂໍ້ຮອງຮຽນ, ຜູ້ຜະລິດ-ຜູ້ປະກອບການ ຈະຕ້ອງ ຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນ ທັງໝົດ.
- **ການກວດກາຕາມການຮ້ອງຮຽນ** (Extra inspection on appeals) ແມ່ນການກວດກາຕາມຄໍາສັ່ງຂອງຄະນະ ກໍາມະການພິຈາລະນາ ຄືນຜົນຂອງການຕັດສິນຄືນໃໝ່ ຈາກຜູ້ຜະລິດ ແລະ ຜູ້ປະກອບການ. ການກວດປະເພດນີ້ອາດແຈ້ງ ຫລື ບໍ່ແຈ້ງ ໃຫ້ຜູ້ຜະລິດ-ຜູ້ປະກອບການ ຮູ້ລ່ວງໜ້າ ກໍ່ໄດ້, ແຕ່ຜູ້ຜະລິດ-ຜູ້ປະກອບການ ຈະຕ້ອງຮັບຜິດຊອບ ຄ່າໃຊ້ຈ່າຍ ທີ່ເກີດຂຶ້ນ.
- **ການປະເມີນຄຸນນະພາບ ລະບົບພາຍໃນ** (Internal quality control) ແມ່ນການກວດກາຈາກ ໜ່ວຍງານ ຮັບຮອງມາດຕະຖານ (Accreditation Body-{AB}) ເພື່ອກວດກາລະບົບການເຮັດວຽກ ຂອງນັກກວດກາ ແລະ ການຈັດຕັ້ງປະຕິບັດ ວຽກງານ ຂອງໜ່ວຍງານ ອອກ

ໃຊຢັ້ງຢືນ ໂດຍປົກກະຕິ ຈະເປັນການກວດກາ ໂດຍບໍ່ແຈ້ງໃຫ້ ຜູ້ຜະລິດ-ຜູ້ປະກອບການ ຮູ້ລ່ວງໜ້າ ການກວດກາ ປະເພດນີ້ ໜ່ວຍງານອອກໃບຢັ້ງຢືນ ຈະຮັບ ຜິດຊອບຄ່າໃຊ້ຈ່າຍໃນການກວດເອງ ໂດຍບໍ່ມີການເກັບຄ່າທຳນຽມ ໃນການກວດເພີ່ມ.

- **ການກວດກາເພີ້ມສຳລັບຜະລິດຕະພັນໃໝ່** (Additional inspection for new production) ແມ່ນການກວດກາ ໃນກໍລະນີ ທີ່ຜູ້ຜະລິດ-ຜູ້ປະກອບການ ທີ່ໄດ້ຮັບການຢັ້ງຢືນແລ້ວ, ແຕ່ຕ້ອງການຂໍການຢັ້ງຢືນ ພື້ນທີ່ການຜະລິດ ຫລື ສະຖານທີ່ປະກອບການໃໝ່ເພີ່ມເຕີມ. ໃນກໍລະນີນີ້, ຜູ້ຜະລິດ-ຜູ້ປະກອບການ ຈະຕ້ອງສະໝັກ ຂໍການຢັ້ງຢືນເພີ່ມເຕີມ.

**5.3 ວິທີການກວດກາ.**

ຫລັງຈາກໄດ້ຮັບໃບສະໝັກ ແລະ ມີຂໍ້ມູນຄົບຖ້ວນ ຕາມເງື່ອນໄຂທີ່ກຳນົດໄວ້, ໜ່ວຍງານອອກໃບຢັ້ງຢືນ ຈະແຈ້ງ ໃຫ້ຜູ້ຜະລິດ-ຜູ້ປະກອບການຮູ້ລ່ວງໜ້າກ່ອນ ຈະແຕ່ງຕັ້ງໃຫ້ນັກກວດກາໄປກວດກາຟາມ/ສະຖານທີປະກອບການ.

ເມື່ອຜູ້ຜະລິດ-ຜູ້ປະກອບການ ໄດ້ຮັບແຈ້ງຊື່ນັກກວດກາ, ຜູ້ຜະລິດ-ຜູ້ປະກອບການ ມີສິດປະຕິເສດ ນັກກວດກາທີ່ໄດ້ຖືກແຕ່ງຕັ້ງ, ຖ້າຜູ້ຜະລິດ-ຜູ້ປະກອບການ ສາມາດຊີ້ແຈງເຫດຜົນ ທີເຊື່ອຖືໄດ້ວ່າ ນັກກວດກາຜູ້ນັ້ນມີຜົນປະໂຫຍດ ກ່ຽວຂ້ອງກັບການຜະລິດ ແລະ ການປຸງແຕ່ງຂອງຜູ້ຜະລິດ-ຜູ້ປະກອບການ ຊຶ່ງອາດເຮັດໃຫ້ຜູ້ຜະລິດ-ຜູ້ປະກອບການບໍ່ໄດ້ຮັບຄວາມເປັນທຳ, ຜູ້ຜະລິດ-ຜູ້ປະກອບການ ຕ້ອງເຮັດໜັງສື ເປັນລາຍລັກອັກສອນ ແຈ້ງໃຫ້ໜ່ວຍງານ ອອກໃບຢັ້ງຢືນ ຊາບໂດຍທັນທີ.

ນັກກວດກາຈະນັດວັນທີ່ຈະໄປກວດກາຟາມ/ສະຖານທີປະກອບການ ກັບຜູ້ສະມັກ ໂດຍກົງ. ໃນວັນທີນັດກວດກາຟາມ/ສະຖານທີ່ປະກອບການ ຜູ້ຜະລິດ-ຜູ້ປະກອບການ ຈະຕ້ອງຢູ່ທີ່ຟາມ/ສະຖານ ທີ່ປະກອບການຕະຫລອດເວລາ ທີ່ມີການກວດກາ, ຫາກມີຄວາມຈຳເປັນ ທີ່ຫລີກລ້ຽງ ບໍ່ໄດ້ ອາດຈະຂໍເລື່ອນ ນັດໝາຍ ແລະ ກຳນົດວັນນັດ ກັບ ນັກກວດກາ ຫຼື ໜ່ວຍງານອອກໃບຢັ້ງຢືນ.

ຜູ້ຜະລິດ-ຜູ້ປະກອບການ ຈະຕ້ອງໃຫ້ຄວາມຮ່ວມມື ອະນຸຍາດໃຫ້ນັກກວດກາ ເຂົ້າກວດກາຟາມ ແລະ ສະຖານທີປະກອບການ. ໃນກໍລະນີ ຜູ້ຜະລິດ-ຜູ້ປະກອບການ ເປັນຜູ້ເຮັດໃຫ້ການກວດກາຕ້ອງເສຍເວລາ ແລະ ເກີດຄ່າໃຊ້ຈ່າຍ ສຳລັບການກວດກາ ຕ້ອງເສຍເວລາ ແລະ ເກີດຄ່າໃຊ້ຈ່າຍ ສຳລັບກສານກວດກາ ເພີ່ມຂຶ້ນ, ຜູ້ຜະລິດ-ຜູ້ປະກອບການ ຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ.

ການກວດກາ ມາດຕະຖານກະສິກຳ ອິນຊີ ປະກອບມີ ວິທີ ດັ່ງນີ້:

1. ສຳພາດ ຜູ້ຜະລິດ-ຜູ້ປະກອບການ/ຜູ້ຮັບຜິດຊອບ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ກັບການຜະລິດ ແລະ ການປຸງແຕ່ງ.
2. ກວດກາເອກະສານບັນທຶກການຜະລິດ, ບັນຊີຊື້-ຂາຍ ແລະ ບັນຊີອື່ນໆ
3. ກວດກາຟາມ ແລະ ສະຖານທີ່ປະກອບການ (ລວມທັງກະສິກຳ ອິນຊີ ແລະ ກະສິກຳເຄມີ)

ພາຍຫລັງການກວດກາສຳເລັດ, ຜູ້ກວດກາ ຕ້ອງເຮັດບົດລາຍງານ, ຜູ້ຜະລິດ-ຜູ້ປະກອບການ ຕ້ອງໄດ້ອ່ານບົດລາຍງານ ແລະ ເຫັນດີເປັນເອກະພາບ ພ້ອມລົງລາຍາເຊັນ ຮັບຮູ້ວ່າ ຂໍ້ມູນໃນ ບົດລາຍງານ ການກວດກາ ນັ້ນຖືກຕ້ອງຕາມການບັນທຶກໄວ້. ໃນກໍລະນີ ຜູ້ຜະລິດ-ຜູ້ປະກອບການ ຕ້ອງສຳເນົາ ບົດລາຍງານ ການກວດການັ້ນ ຕ້ອງຕິດຕໍ່ຂໍນຳໜ່ວຍງານອອກໃບຢັ້ງຢືນ.

**5.4 ການສຸ່ມຕົວຢ່າງເພື່ອກວດກາວິເຄາະຫາສານພິດຕົກຄ້າງ.**

ກໍລະນີມີຄວາມສົງໄສ ຫລື ສົງໃສ ຈະມີສານພິດຕົກຄ້າງໃນນ້ຳ, ດິນ ຫລື ຜົນຜະລິດ, ສ່ວນປະສົມ, ນັກກວດກາ, ອາດສຸ່ມເອົາຕົວຢ່າງ ໄປກວດວິໃຈ ຫາສານພິດຕົກຄ້າງ ພ້ອມດຽວກັນນັ້ນ ຜູ້ຜະລິດ-ຜູ້ປະກອບການ ຕ້ອງຮັບຮູ້ ຂະບວນການດັ່ງກ່າວ.

**5.5 ການສຸ່ມຕົວຢ່າງເພື່ອກວດກາວິເຄາະຫາສານປົນເປື້ອນ.**

ກໍລະນີ ມີຄວາວສົງໄສ ຫລື ສົງໃສ ມີການປົນເປື້ນ ພືດ ຕັດແຕ່ງພັນທຸກຳ ຫລື ມີສ່ວນປະກອບ ທີ່ໄດ້ຈາກ ຜະລິດຕະພັນຕັດແຕ່ງພັນທຸກຳ, ນັກກວດກາອາດສຸ່ມເອົາຕົວຢ່າງ ໄປກວດວິໃຈ ຫາສານປົນເປື້ອນ ພ້ອມດຽວກັນນັ້ນ ຜູ້ຜະລິດ-ຜູ້ປະກອບການ ຕ້ອງຮັບຮູ້ຂະບວນການດັ່ງກ່າວ.

**6. ການກວດກາ ແລະ ການຢັ້ງຢືນ ກະສະກຳອິນຊີ**

ການກວດກາ ແລະ ການຢັ້ງຢືນ ກະສິກຳ ອິນຊີ ຂອງລາວ ແມ່ນການກວດກາ ແລະ ຢັ້ງຢືນ ລະບົບ ການຜະລິດ, ລະບົບການປຸງແຕ່ງ, ການເກັບກູ້ຜົນຜະລິດຈາກປ່າ ແລະ ລະບົບການຜະລິດແບບກຸ່ມ, ປະກອບມີດັ່ງນີ້:

| | |
|---|---|
| 1. ການກວດກາ ແລະ ການຢັ້ງຢືນ ຟາມ | ການຄວບຄຸ້ມຕັ້ງແຕ່ເລີ່ມປູກ ຈົນຮອດ ການເກັບກ່ຽວ, ເກັບຮັກສາຜົນຜະລິດ ແລະ ບັນຈຸຂາຍ |

| | |
|---|---|
| 2. ການກວດກາ ແລະ ການຢັ້ງຢືນ ລະບົບ ການປຸງແຕ່ງ | ການກວດກາ ຈະເລີ່ມຕັ້ງແຕ່ ຜົນຂອງຜະລິດ ແລະ ຈັດການວັດຖຸດິບ, ວິທີປຸງແຕ່ງ, ການບັນຈຸ, ການຂົນສົ່ງ ແລະ ການຈຳໜ່າຍ |
| 3. ການກວດກາ ແລະ ການຢັ້ງຢືນ ແບບກຸ່ມ | ການກວດກາ ເລີມແຕ່ປູກ ຈົນຮອດ ການເກັບກ່ຽວ, ປຸງແຕ່ງ, ເກັບຮັກສາຜົນຜະລິດ ແລະ ບັນຈຸຂາຍ. |
| 4. ການກວດກາ ແລະ ຢັ້ງຢືນຜົນ ຜະລິດຈາກປ່າ | ການກວດກາ ຈະເລີມຕັ້ງແຕ່ ແຫລ່ງທີ່ມາຂອງຜົນຜະລິດ ແລະ ການຈັດການວັດຖຸດິບ, ວິທີການປຸງແຕ່ງ, ການບັນຈຸ, ການຂົນສົ່ງ ແລະ ຈຳໜ່າຍ. |

## 7. ການແຈ້ງຜົນການຢັ້ງຢືນ ແລະ ອອກໃບຢັ້ງຢືນ

### 7.1. ການແຈ້ງຜົນການຢັ້ງຢືນ.

ຫລັງຈາກການກວດກາສຳເລັດ, ໜ່ວຍງານອອກໃບຢັ້ງຢືນ ຈະແຈ້ງຜົນການຢັ້ງຢືນ ໃຫ້ຜູ້ຜະລິດ-ຜູ້ປະກອບການ ພາຍໃນເວລາ ບໍ່ເກີນ 6 ເດືອນ ນັບຈາກມື້ລົງກວດກາ.

ຄະນະກຳມະການພິຈາລະນາ ອອກໃບຢັ້ງຢືນ ເຫັນດີ ອອກໃບຢັ້ງຢືນ ໃຫ້ແກ່ຜູ້ຜະລິດ-ຜູ້ປະກອບການ. ບາງກໍລະນີຄະນະກຳມະການ ອາດຈະກຳນົດເງື່ອນໄຂ ຫລື ຂໍ້ແນະນຳ ໃຫ້ຜູ້ຜະລິດ-ຜູ້ປະກອບການ ປະຕິບັດຕາມເງື່ອນໄຂເພີ່ມເຕີມ ຕົວຢ່າງ:

- ການເຊັ່ນສັນຍາ ລະຫວ່າງ ຜູ້ຜະລິດ-ຜູ້ປະກອບການ ກັບຜູ້ຮັບຈ້າງຜະລິດ ແລະ ສຳເນົາເອກະສານ ສົ່ງໃຫ້ໜ່ວຍງານ ອອກໃບຢັ້ງຢືນ.
- ປັບປຸງ ແນວປ້ອງກັນໃຫ້ແລ້ວ ກ່ອນລະດູ ການຜະລິດ ລ່ວງໜ້າ ເງື່ອນໄຂເຫລົ່ານີ້ ຈະໄດ້ຕິດຕາມປະເມີນຜົນຈາກ ໜ່ວຍງານ ອອກໃບຢັ້ງຢືນ ໂດຍຜ່ານການກວດກາ ປະຈຳປີ ຫລືການກວດກາພິເສດ ໄດ້ປະຕິບັດຕາມເງື່ອນໄຂ ຫລື ຂໍ້ສະເໜີແນະ ຫລື ບໍ່.

ເງື່ອນໄຂ ແລະ ຂໍ້ແນະນຳ ເຫລົ່ານີ້ຈະລະບຸໄວ້ໃນໜັງສື ແຈ້ງຜົນ ການພິຈາລະນາອອກໃບຢັ້ງຢືນ, ເມື່ອຜູ້ຜະລິດ-ຜູ້ປະກອບການ ໄດ້ຮັບໜັງສື ແລ້ວຕ້ອງເຊັ່ນຮັບຮູ້ວ່າ ຍິນຍອມ ປະຕິບັດຕາມເງື່ອນໄຂດັ່ງກ່າວ ແລະ ສົ່ງຄືນ ໃຫ້ໜ່ວຍງານອອກໃບຢັ້ງຢືນ ຫລື ຫາກຜູ້ຜະລິດ-ຜູ້ປະກອບການ ເຫັນວ່າ ຂໍ້ມູນບໍ່ຖືກຕ້ອງ ຕາມຄວາມເປັນຈິງ, ຜູ້ປະກອບການ ມີສິດ ເຮັດໜັງສື ຮ້ອງຮຽນ ເປັນລາຍລັກອັກສອນ ເຖິງຄະນະກຳມະການ ພິຈາລະນາອອກໃບຢັ້ງຢືນ ພາຍໃນ 30 ວັນ.

### 7.2. ການອອກໃບຢັ້ງຢືນ

ສຳລັບຜູ້ ຜູ້ຜະລິດ-ຜູ້ປະກອບການ ທີ່ໄດ້ຮັບການຢັ້ງຢືນ ມີສິດນຳໃຊ້ກາໝາຍ ກະສິກຳອິນຊີລາວ ໄດ້ ພາຍຫລັງໄດ້ຮັບໃບຢັ້ງຢືນ. ຜູ້ຜະລິດ-ຜູ້ປະກອບການ ສາມາດນຳໃຊ້ໃບຢັ້ງຢືນ ເປັນເອກະສານ ຢັ້ງຢືນຜົນຜະລິດ ແລະ ຜະລິດຕະພັນ ກະສິກຳ ອິນຊີ.

ຜູ້ປະກອບການ ຕ້ອງຊື້ຜົນຜະລິດ ກະສິກຳອິນຊີ ຈາກຟາມທີ່ໄດ້ຮັບການຢັ້ງຢືນ ກັບໜ່ວຍງານ ອອກໃບຢັ້ງຢືນ ທີ່ໄດ້ຮັບຮອງ ຈາກກົມປູກຝັງເທົ່ານັ້ນ. ຜູ້ເກັບ ຊື້ຕ້ອງເອົາສຳເນົາໃບຢັ້ງຢືນ ແລະ ເອກະສານຊື້-ຂາຍ ຈາກ ຜູ້ຜະລິດ ແລະ ກະກຽມເອກະສານ ທີ່ກ່ຽວຂ້ອງ ໃຫ້ແກ່ຜູ້ກວດກາ ເພື່ອ ຢັ້ງຢືນ ວ່າຜົນຜະລິດ ທີ່ຊື້ມານັ້ນ ໄດ້ຮັບການຢັ້ງຢືນກະສິກຳອິນຊີ.

ໃບຢັ້ງຢືນ ກະສິກຳ ອິນຊີ ມີອາຍຸ 1 ປີ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ. ເມື່ອໃບຢັ້ງຢືນເກົ່າ ໝົດອາຍຸ, ຜູ້ຜະລິດ-ຜູ້ປະກອບການ ຕ້ອງຂໍຕໍ່ອາຍຸ ໃບຢັ້ງຢືນນຳຫນ່ວຍງານ ອອກໃບຢັ້ງຢືນ.

ໃນກໍລະນີ ມີການກວດກາ ພົບເຫັນ ມີການລະເມີດມາດຕະຖານ, ໜ່ວຍງານອອກໃບຢັ້ງຢືນ ມີ ສິດທີ່ຈະລະງັບ ໃບຢັ້ງຢືນ ນັ້ນໄດ້ທັນທີ.

ໃບຢັ້ງຢືນ ຈະລະບຸຊື່ ແລະ ທີ່ຢູ່ ຂອງຜູ້ຜະລິດ-ຜູ້ປະກອບການ, ພື້ນທີ່ ຜົນຜະລິດ ແລະ ຜະລິດຕະພັນ. ໃນກໍລະນີມີ ການປ່ຽນແປງ ການຜະລິດ ເຊັ່ນ: ປ່ຽນສູດ ຫລື ວິທີປຸງແຕ່ງ, ຍ້າຍ ສະຖານທີ່ ປະກອບການ, ຜູ້ຜະລິດ-ຜູ້ປະກອບການ ຕ້ອງແຈ້ງໃຫ້ໜ່ວຍງານ ອອກໃບຢັ້ງຢືນຊາບ ແລະ ສະໝັກຂໍການຢັ້ງຢືນເພີ່ມເຕີມ.

8. ການສະເໜີຂໍພິຈາລະນາຜົນການຢັ້ງຢືນຄືນໃໝ່.

ໃນກໍລະນີ ຜູ້ຜະລິດ-ຜູ້ປະກອບການ ບໍ່ໄດ້ຮັບການຢັ້ງຢືນ, ຜູ້ຜະລິດ-ຜູ້ປະກອບການ ມີສິດ ສະເໜີ ຂໍພິຈາລະນາ ຜົນການຢັ້ງຢືນຄືນໃໝ່ ຕໍ່ໜ່ວຍງານອອກໃບຢັ້ງຢືນ.

ສຳລັບຜູ້ຮັບຈ້າງຜະລິດ ຫຼື ຜູ້ຜະລິດພາຍໃນກຸ່ມຕ້ອງການສະເໜີຂໍພິຈາລະນາຜົນການຢັ້ງຢືນ ຄືນໃໝ່ ຕ້ອງສະເໜີຜ່ານ ຜູ້ສະໝັກຂໍການຢັ້ງຢືນ ກັບໜ່ວຍງານ ອອກໃບຢັ້ງຢືນ ໂດຍມີຂັ້ນຕອນ ດັ່ງນີ້:

- ຜູ້ສະເໜີ ຕ້ອງເຮັດໜັງສື ແລະ ປະກອບຂໍ້ມູນ ເພີ້ມເຕີມ ຫາຄະນະ ກຳມະການ ພິຈາລະນາອອກ ໃບຢັ້ງຢືນ ເພື່ອຄົ້ນຄ້ວາຄືນໃຫມ່.
- ໜ່ວຍງານ ອອກໃບຢັ້ງຢືນ ຈະພິຈາລະນາ ຂໍ້ສະເໜີ ແລ ຊີ້ແຈງເບື້ອງຕົ້ນ, ໃຫ້ແກ່ຜູ້ສະເໜີ, ຖ້າ ເປັນເລື່ອງເຂົ້າໃຈຜິດ ຂອງຜູ້ຜະລິດ-ຜູ້ປະກອບການ ກ່ຽວກັບ ການພິຈາລະນາ ຫລື ຂໍ້ບົກຜ່ອງ ຂອງນັກກວດກາ, ໜ່ວຍງານອອກໃບຢັ້ງຢືນ ຈະຊີ້ແຈງ ຫລື ແກ້ໄຂ ໃຫ້ຖືກຕ້ອງໂດຍ ທັນທີ.

- ໃນກໍລະນີ ຜູ້ຜະລິດ-ຜູ້ປະກອບການ ບໍ່ເຫັນດີ ຕໍ່ການຊີ້ແຈງ, ໜ່ວຍງານ ອອກໃບຢັ້ງຢືນ ຈະສົ່ງເລື່ອງ ໃຫ້ຄະນະກໍາມະການ ພິຈາລະນາຄືນ ແຕ່ຜູ້ສະເໜີຕ້ອງຈ່າຍຄ່າມັດຈໍາລວງໜ້າ ຈໍານວນເງິນ 500,000 ກີບ.
- ໃນກໍລະນີ ຜູ້ຜະລິດ-ຜູ້ປະກອບການ ບໍ່ເຫັນດີ ຕໍ່ການຊີ້ແຈງ, ໜ່ວຍງານ ອອກໃບຢັ້ງຢືນ ຈະສົ່ງເລື່ອງ ໃຫ້ຄະນະກໍາມະການ ພິຈາລະນາຄືນ ແຕ່ຜູ້ສະເໜີ ຕ້ອງຈ່າຍຄ່າມັດຈໍາ ຄືນທັງໝົດ.
- ໃນກໍລະນີ ຜົນການພິຈາລະນາໃໝ່ ມີການປ່ຽນແປງ ຈາກຄໍາພິຈາລະນາ ຕາມຂໍ້ສະເໜີ ຂອງຜູ້ສະເໜີ ຈະໄດ້ຮັບຄ່າມັດຈໍາຄືນ.

9. ກົດລະບຽບການນໍາໃຊ້ກາໝາຍກະສິກໍາອິນຊີ.

ຜູ້ຜະລິດ-ຜູ້ປະກອບການ ທີ່ໄດ້ຮັບການຢັ້ງຢືນຜົນຜະລິດ ແລະ ຜະລິດຕະພັນກະສິກໍາ ອິນຊີ ມີສິດຂາຍຜົນຜະລິດ ແລະ ຜະລິດຕະພັນ ແລະ ສາມາຕິດກາ ໝາຍະກະສກໍາອິນຊີລາວ ໃສ່ເທິງຜົນຜະລິດຕະພັນຂອງຕົນ, ແຕ່ຕ້ອງເຮັດສັນຍາສໍາລັບ ຂໍ້ຄວາມ ທີ່ຈະໄປຕິດເທິງ ຜະລິດຕະພັນ ຕ້ອງປະຕິບັດ ຕາມລະບຽບການວ່າດ້ວຍ ການໃຊ້ກາໝາຍ ກະສິກໍາ ອິນຊີລາວ ຂອງກົມ ປູກຝັງດັ່ງນີ້:

- ຜົນຜະລິດ ທີ່ຍັງຄ້າງຢູ່ໃນຊ່ວງ ໄລຍະການປັບປ່ຽນ ຈະຍັງບໍ່ມີສິດໃຊ້ ກາໝາຍ ກະສິກໍາ ອິນຊີລາວ. ກໍລະນີ ຜູ້ປະກອບການ ຊື້ຜົນຜະລິດ ທີ່ຍັງຢູ່ໃນໄລຍະການປັບປ່ຽນ ມາເຮັດການປຸງແຕ່ງ ຫລື ບັນຈຸຂາຍ ຜະລິດຕະພັນນັ້ນ ບໍ່ມີສິດ ໃຊ້ກາໝາຍ ກະສິກໍາອິນຊີລາວ.
- ຜູ້ຜະລິດ-ຜູ້ປະກອບການ ຈະຕ້ອງມີຊື່ ຍີ່ຫໍ່ ຂອງຕົນ ເທິງຜະລິດຕະພັນ ຫ້າມໃຊ້ກາໝາຍ ກະສິກໍາອິນຊີລາວ ແລະ ຂະໜາດຂອງ ສັນຍາລັກ ກາໝາຍກະສິກໍາອິຊີລາວ ບໍ່ໃຫ້ເກີນ 3/4 ຂອງຂະໜາດຍີ່ຫໍ່ ຜະລິດຕະພັນ.
- ຫ້າມໃຊ້ກາໝາຍກະສິກໍາ ອິນຊີລາວ ໃສ່ເທິງຜົນຜະລິດ ຫລື ຜະລິດຕະພັນທີ່ ບໍ່ໄດ້ຮັບການຢັ້ງຢືນຈາກໜ່ວຍງານອອກໃບຢັ້ງຢືນ, ຊຶ່ງອາດຈະກໍ່ໃຫ້ຜູ້ບໍລິໂພກເຂົ້າໃຈຜິດ.

10. ການລະເມີດມາດຕະຖານກະສິກໍາອິນຊີ ຂອງ ສປປ ລາວ.

ກໍລະນີ ຜູ້ຜະລິດ-ຜູ້ປະກອບການ ໄດ້ລະເມີດມາດຕະຖານກະສິກໍາ ອິນຊີ ພາຍຫລັງໄດ້ຮັບການຢັ້ງຢືນແລ້ວ, ໜ່ວຍງານ ອອກໃບຢັ້ງຢືນ ອາດພິຈາລະນາລົງໂທດ ຕາມຄວາມໜັກ-ເບົາ ຂອງການລະເມີດດັ່ງນີ້:

- ເຮັດໜັງສືເຕືອນ
- ເຮັດການກວດພິເສດເພີ່ມເຕີມຊຶ່ງ ຜູ້ຜະລິດ-ຜູ້ປະກອບການ ຈະຕ້ອງເສຍຄ່າໃຊ້ຈ່າຍໃນການກວດກາທີເກີດນີ້.

- ປັບໃໝເປັນເງິນ.
- ຕັດສິດການນຳໃຊ້ກາໝາຍ
- ລະງັບໃບຢັ້ງຢືນ.
- ຖອດຖອນໃບຢັ້ງຢືນ.
- ກໍລະນີ ໜ່ວຍງານອອກໃບຢັ້ງຢືນ ພົບວ່າ ຜູ້ຜະລິດ-ຜູ້ປະກອບການ ເຮັດການລະເມີດ ມາດຕະຖານ ຢ່າງຮຸນແຮງ ໜ່ວຍງານອອກໃບຢັ້ງຢືນມີສິດທີ່ຈະລະງັບ ການຢັ້ງຢືນ ຊົ່ວຄາວ ເປັນເວລາບໍ່ເກີນ 45 ວັນ ໂດຍໃນຊ່ວງເວລາດັ່ງກ່າວ ຜູ້ຜະລິດ-ຜູ້ປະກອບການ ຈະຈຳໜ່າຍ ຜົນຜະລິດ ແລະ ຜະລິດຕະພັນ ກະສິກຳອິນຊີ ຈະລາຍງານບັນຫາ ໃຫ້ແກ່ຄະນະກຳມະການ ພິຈາລະນາອອກ ໃບຢັ້ງຢືນ ລົງໂທດ.

11. ການໂຈະ ການຖອນໃບຢັ້ງຢືນ.

ການລະງັບ ການຖອນໃບຢັ້ງຢືນ ຈະເກີດຂຶ້ນ ໃນກໍລະນີ ທີ່ໄດ້ພິສູດ ລະອຽດ ແລ້ວວ່າ ມີການ ລະເມີດຂໍ້ຕົກລົງ/ກົດລະບຽບ/ມາດຕະຖານ ຂອງ ໜ່ວຍງານອອກໃບຢັ້ງຢືນ ຫລື ບໍ່ປະຕິບັດຕາມ ເງື່ອນໄຂ ໃນການຢັ້ງຢືນ ຂອງໜ່ວຍງານ ອອກໃບຢັ້ງຢືນ ເປັນການຕັ້ງໃຈ ຫລື ບໍ່ຕັ້ງໃຈ ບໍ່ ປະຕິບັດຕາມເງື່ອນໄຂ ແລະ ລະບຽບການທີ່ກຳນົດໄວ້, ຊຶ່ງເຮັດໃຫ້ ເກີດຜົນກະທົບ ຕໍ່ຄວາມໜ້າ ເຊື່ອຖື ຂອງ ໜ່ວຍງານ ອອກໃບຢັ້ງຢືນ ຢ່າງຮຸນແຮງ.

ກໍລະນີ ຜູ້ຜະລິດ-ຜູ້ປະກອບການ ຖືກລະງັບ ຫລື ຖອດຖອນໃບຢັ້ຢືນ ຈະເຮັດໃຫ້ສິດໃນການໃຊ້ ກາໝາກະສິກຳອິນຊີ ສິ້ນສຸດລົງທັນທີ, ຜູ້ຜະລິດ-ຜູ້ປະກອບການ ຕ້ອງດຳເນີນການດັ່ງນີ້:

- ຜູ້ຜະລິດ-ຜູ້ປະກອບການ ຕ້ອງລຶບລ້າງ ຫລື ປົກປິດ ກາໝາຍກະສິກຳອິນຊີລາວ ທີ່ຕິດຢູ່ໃນ ສະຫລາກ ຂອງຜົນຜະລິດນັ້ນ ແລ້ວສົ່ງໃຫ້ ໜ່ວຍງານ ອອກໃບຢັ້ງຢືນ ພິຈາລະນາຕາມຄວາມເໝ າະສົມ. ກໍລະນີ ເກີດມີຄ່າໃຊ້ຈ່າຍ ໃນການດຳເນີນງານ, ຜູ້ຜະລິດ-ຜູ້ປະກອບການ ຕ້ອງຮັບຜິດຊອບ ທັງໝົດ.
- ໜ່ວຍງານອອກໃບຢັ້ງຢືນ ອະນຸຍາດ ໃຫ້ຜູ້ຜະລິດ-ຜູ້ປະກອບການ ທີ່ຖືກລະງັບ ຫລື ຖອດຖອນ ການຢັ້ງຢືນສາມາດດຳເນີນ ຈຳໜ່າຍຜະລິດຕະພັນ ທີ່ມີກາໝາຍກະສິກຳອິນຊີ ເທົ່າທີ່ຍັງມີໃນສາງ ສິນຄ້າ. ວັນທີ່ມີການລະງັບ ຫລື ຖອດຖອນການຢັ້ງຢືນ ຜູ້ຜະລິດ-ຜູ້ປະກອບການ ຈະຄ້ອງເຮັດ ສັນຍາຂໍ້ຕົກລົງພິເສດ ກັບ ໜ່ວຍງານອອກໃບຢັ້ງຢືນ.

- ຜູ້ຜະລິດ-ຜູ້ປະກອບການ ມີສິດຂໍຍື່ນອຸທອນຄໍາສັ່ງລະງັບ ຖອດຖອນ ການຢັ້ງຢືນ. ການລະງັບ ຈະມີຜົນບັງຄັບໃຊ້ ຈົນກວ່າການສະເໜີຈະໄດ້ຮັບການພິຈາລະນາຄືນໃໝ່ ຈາກຄະນະກໍາມະການພິຈາລະນາ ອອກໃບຢັ້ງຢືນ.
- ຜູ້ຜະລິດ-ຜູ້ປະກອບການ ທີ່ຖືກຖອດຖອນ ໃບຢັ້ງຢືນ ອາດຖືກຕັດສິດການສະໝັກຂໍການຢັ້ງຢືນກະສິກໍາ ອິນຊີ ເປັນເວລາບໍ່ເກີນ 3 ປີ.

12. ການຕໍ່ອາຍຸໃບຢັ້ງຢືນ.

ໃບຢັ້ງຢືນກະສິກໍາ ອິນຊີ ສາມາດນໍາໃຊ້ໄດ້ 1 ປີ, ຜູ້ຜະລິດ-ຜູ້ປະກອບການ ທີ່ໄດ້ຮັບການຢັ້ງຢືນ ຈາກໜ່ວຍງານ ອອກໃບຢັ້ງຢືນ ຕ້ອງໄດ້ດໍາເນີນການກວດກາ ຢ່າງນ້ອຍ ປີລະ 1 ຄັ້ງ, ເພື່ອກວດກາເບິ່ງວ່າ ຜູ້ຜະລິດ ແລະ ຜູ້ປະກອບການ ຍັງປະຕິບັດ ຕາມມາດຕະຖານ ກະສິກໍາ ອິນຊີ ຂອງລາວ ຢູ່ ຫລື ບໍ່ ເພື່ອໃຫ້ໄດ້ຮັບການ ຢັ້ງຢືນ ຢ່າງຕໍ່ເນື່ອງ. ຫນ່ວຍງານອອກໃຊຢັ້ງຢືນ ຈະຈັດສົ່ງແບບຟອມ ຕໍ່ອາຍຸຢ່າງໜ້ອຍ 120 ວັນ. ຜູ້ຜະລິດ-ຜູ້ປະກອບການ ຕ້ອງແຈ້ງຄວາມປະສົງ ຂໍຕໍ່ອາຍຸ ໂດຍການ ຊຸງນໃບຕໍ່ອາຍຸ ແລະ ແຈ້ງແຜນການ ຜະລິດ ຕະຫລອດທັງປີ ໃຫ້ໜ່ວຍງານອອກໃບຢັ້ງຢືນ ຊາບ ແລະ ເປັນຂໍ້ມູນ ໃນການວາງ ແຜນດໍາເນີນການກວດກາ ແລະ ອອກໃຊຢັ້ງຢືນປະຈໍາປີ. ສໍາລັບ ຂັ້ນຕອນການປະຕິບັດ ໃຫ້ປະຕິບັດຕາມການສະໝັກການຂໍຢັ້ງຢືນກັບປີທໍາອິດ.

ເພື່ອເຮັດໃຫ້ອາຍຸ ໃບຢັ້ງຢືນຕໍ່ເນື່ອງ, ຜູ້ຜະລິດ-ຜູ້ປະກອບການ ຕ້ອງຍື່ນໃບສະໝັກ ການຂໍຕໍ່ອາຍຸໃບຢັ້ງຢືນ ພາຍໃນ 60 ວັນ ກ່ອນວັນໝົດອາຍຸ ໃບຢັ້ງຢືນ. ກໍລະນີພືດ ແລະ ຜະລິດຕະພັນ ທີ່ຕ້ອງການຂໍການຢັ້ງຢືນ ຍັງຄືເກົ່າ, ໜ່ວຍງານອອກໃບຢັ້ງຢືນ ສາມາດອອດໃບຢັ້ງຢືນ ໃຫ້ໄດ້ທັນທີ, ແຕ່ຖ້າພືດ ແລະ ຜະລິດຕະພັນ ທີ່ຕ້ອງການຂໍການຢັ້ງຢືນ ໃຫ້ໄດ້ທັນ, ແຕ່ຖ້າພືດ ແລະ ຜະລິດຕະພັນ ທີ່ຕ້ອງການ ຂໍຢັ້ງຢືນ ມີການປ່ຽນແປງໄປຈາກເດີມ, ຕ້ອງໄດ້ ກວດກາເພີ່ມເຕີມ ກ່ອນການອອກໃບຢັ້ງຢືນ. ກໍລະນີການກວດປະຈໍາປີ ແລະ ກວດກາ ພິເສດ ພົບວ່າ ຜູ້ຜະລິດ-ຜູ້ປະກອບການລະເມີດມາດຕະຖານ ຫລື ມີການປ່ຽນແປງ ການຜະລິດໂດຍບໍ່ໄດ້ແຈ້ງໃຫ້ໜ່ວຍງານ ອອກໃບຢັ້ງຢືນຊາບ, ໜ່ວຍງານອອກໃບຢັ້ງຢືນ ອາດພິຈາລະນາລະງັບ ໃບຢັ້ງຢືນ ກະສິກໍາອິນຊີ.

12.1. ການສະມັກຂໍຕໍ່ການຢັ້ງຢືນເພີ່ມເຕີມ.

ໃນກໍລະນີ ມີການປ່ຽນແປງ ການຜະລິດ ເຊັ່ນ: ການຂະຫຍາຍພື້ນທີ່ການ ຜະລິດ ກະສິກໍາ ອິນຊີ ຜູ້ຜະລິດ ຕ້ອງເຮັດປະຫັວດ ແລະ ແຜນຜັງ ຂອງຟາມຄືນໃໝ່ ແລ້ວຄັດຕິດກັບ ໃບສະໝັກຂໍຕໍ່ອາຍຸ.

ໃນກໍລະນີມີການເພີ່ມຊະນິດຜະລິດຕະພັນ ທີ່ເຮັດການປຸງແຕ່ງຜູ້ປະກອບການຕ້ອງແຈ້ງມາພ້ອມໃບຕໍ່ອາຍຸ.

ໃນກໍລະນີທີ່ ຜູ້ຜະລິດ-ຜູ້ປະກອບການ ທີ່ໄດ້ຮັບການຢັ້ງຢືນກະສະກໍາ ອິນຊີ ໄປແລ້ວ ແຕ່ຕ້ອງການຂໍການຢັ້ງຢືນ ພືດ ຫລື ຜະລິດຕະພັນເພີ່ມເຕີມ, ຜູ້ຜະລິດ-ຜູ້ປະກອບການ ຕ້ອງຍື່ນໃບສະໝັກຂໍການຢັ້ງຢືນ ຫລື ແຈ້ງໃຫ້ໜ່ວຍງານ ອອກໃບຢັ້ງຢືນ ຊາບກ່ອນຈຶ່ງມີສິດ ຈໍາໜ່າຍຜະລິດຕະພັນພາຍໃຕ້ການຢັ້ງຢືນ ຂອງໜ່ວຍງານ ອອກໃບຢັ້ງຢືນ, ກໍລະນີ ຕ້ອງການຂໍສະໝັກການຢັ້ງຢືນ ເພີ່ມເຕີມມີຄື:

1. ເຮັດການຜະລິດ ຫລື ຜະລິດຕະພັນ ຊະນິດໃໝ່. ຕົວຢ່າງໄດ້ຮັບການ ຢັ້ງຢືນ ການປູກເຂົ້າ ແຕ່ປ່ຽນມາປູກສາລີ.
2. ປ່ຽນແປງຜະລິດຕະພັນເຊັ່ນ: ໄດ້ຮັບການປຸງແຕ່ງການກວັນໝາກນັດ ສູດໜຶ່ງ ແຕ່ປ່ຽນໄປເຮັດໝາກນັດສູດໃໝ່.
3. ປ່ຽນແປງພື້ນທີ່ ຫລື ສະຖານທີ ຜະລິດ ເຊັ່ນ: ຊື້ ທີ່ດິນປູກເຂົ້າອິນຊີເພີ່ມ ຍ້າຍໂຮງງານ ຫລື ສະຖານທີ່ ຜະລິດ.
4. ມີການປ່ຽນແປງວິທີ ການປຸງແຕ່ງຜະລິດ ຕະພັນກະສິກໍາອິນຊີ ເປັນວິທີໃໝ່ ເຊັ່ນ: ປ່ຽນຈາກການສີເຂົ້າ ດ້ວຍເຄື່ອງສີເຂົ້າຂະໜາດນ້ອຍ ມາເປັນເຄື່ອງສີເຂົ້າຂະໜາດໃຫຍ່.

ຜູ້ຜະລິດ-ຜູ້ປະກອບການ ທີ່ຕ້ອງການສະໝັກ ຂໍການຢັ້ງຢືນ ກະສິກໍາ ອິນຊີ ເພີ່ມເຕີມສາມາດຕິດຕໍ່ຂໍແບບຟອມ ນໍາໜ່ວຍງານອອກໃບຢັ້ງຢືນ, ໃນກໍລະນີ ມີການກວດກາຟາມ/ການປຸງແຕ່ງໃໝ່ (ໜ່ວຍງານອອກໃບຢັ້ງຢືນ ອາດກວດສອບ ຈາກ ເອກະສານການສະໝັກ ຂໍການຢັ້ງຢືນເພີ່ມເຕີມ), ຜູ້ຜະລິດ-ຜູ້ປະກອບການ ຕ້ອງຊໍາລະຄ່າໃຊ້ຈ່າຍ ເພີ່ມເຕີມ ຕາມອັດຕາ ຄ່າທໍານຽມການກວດກາ ເພີ່ມເຕີມ ລວມທັງ ຄ່າເດີນທາງ ແລະ ທີ່ພັກຂອງຜູ້ກວດກາ. ໜ່ວຍງານອອກໃບຢັ້ງຢືນ ຈະອອກໃບຢັ້ງຢືນ ກະສິກໍາອິນຊີ ໃຫ້ໃບໃໝ່ ຊຶ່ງລະບຸຊະນິດພືດ ແລະ ຜະລິດຕະພັນໃໝ່ ເພີ່ມເຕີມໃຫ້.

12.2 ການສະໝັກຂໍການຢັ້ງຢືນການຜະລິດພືດຄູ່ຂະໜານ.

ໃນກໍລະນີ ຜູ້ຜະລິດ-ຜູ້ປະກອບການ ໄດ້ຮັບການຢັ້ງຢືນ ກະສິກໍາອິນຊີ ຈາກໜ່ວຍງານອອກໃບຢັ້ງຢືນແລ້ວ. ພື້ນທີ່ການຜະລິດໃໝ່ ທີ່ຕ້ອງການຈະຂໍຢັ້ງຢືນ ເພີ່ມເຕີມ ແລະ ຕ້ອງການປູກພືດຄູ່ຂະໜານ (ປູກພືດ ຊະນິດດຽວກັນກັບ ພື້ນທີ່ໄດ້ຮັບ ການຢັ້ງຢືນ ກະສິກໍາອິນຊີ) ໜ່ວຍງານອອກໃບຢັ້ງຢືນ ອະນຸຍາດໃຫ້ຜູ້ຜະລິດ ເຮັດການຜະລິດ ຄູ່ຂະໜານໂດຍຜູ້ຜະລິດ ຕ້ອງແຈ້ງໃຫ້ ໜ່ວຍ

ງານ ອອກໃບຢັ້ງຢືນ ຊາບລ່ວງໜ້າກ່ອນ ທີ່ຈະປູກພືດຄູ່ຂະໜານ, ໂດຍຂຽນແບບຟອມ ແຈ້ງການ ຜະລິດພືດຄູ່ ຂະໜານ ແລະ ມາດຕະການ ຈັດການ ປ້ອງກັນ ການປົນເປື້ອນ ຂອງຜົນຜະລິດ ໃຫ້ ໜ່ວຍງານ ອອກໃບຢັ້ງຢືນ ແລະ ຊຳລະຄ່າທຳນຽມ ການຜະລິດ ພືດຄູ່ຂະໜານ ຕາມອັດຕາທີ່ລະບຸ ໄວ້ ໃນຕາຕະລາງຄ່າທຳນຽມ ແລະ ໜ່ວຍງານອອກໃບຢັ້ງຢືນ ຈະສົ່ງນັກກວດກາໄປເຮັດການກວດ ເພີ່ມເຕີມ ໃນໄລຍະເກັບກ່ຽວ, ເພື່ອປະເມີນວ່າຜູ້ຜະລິດສາມາດ ຈັດແຍກຜົນຜະລິດ ກະສິກຳອິນຊີ ຫລື ບໍ່. ຖ້າພົບວ່າ ຜູ້ຜະລິດ ບໍ່ສາມາດຈັດແຍກຜົນຜະລິດໄດ້. ໜ່ວຍງານອອກໃບຢັ້ງຢືນ ອາດ ພິຈາລະນາ ບໍ່ຢັ້ງຢືນ ຜົນຜະລິດ ໃນໄລຍະນັ້ນ.

ໃນກໍລະນີ ທີ່ຜູ້ຜະລິດບໍ່ແຈ້ງ ແຜນການຜະລິດພືດຄູ່ຂະໜານໃຫ້ໜ່ວຍງານ ອອກໃບຢັ້ງຢືນ ຊາບລ່ວງໜ້າ ແລະ ຜູ້ກວດກາໄປພົບວ່າ ຜູ້ຜະລິດເຮັດການ ຜະລິດພືດ ຄູ່ຂະໜານໃນພື້ນທີ່ກະສິກຳ ອິນຊີ ແລະ ພື້ນທີ່ ປັບປ່ຽນ ໃນເວລາໄປກວດກາ ປະຈຳປີ/ກວດກາພິເສດ, ໜ່ວຍງານອອກ ໃບຢັ້ງຢືນ ຈະຖືວ່າຜູ້ຜະລິດໄດ້ລະເມີດມາດຕະຖານກະສິກຳອິນຊີ ແລະ ຈະລະງັບການຢັ້ງຢືນ ອະນຸຍາດໃຫ້ຜູ້ຜະລິດ ເຮັດການຜະລິດພືດຄູ່ຂະໜານ ໄດ້ສະເພາະການຜະລິດໃນພື້ນທີ່ກະສິກຳອິນຊີ ແລະ ພື້ນທີ່ກະສິກຳເຄມີ ໜ່ວຍງານອອກໃບຢັ້ງຢື່ນ ຈະບໍ່ພິຈາລະນາ ຢັ້ງຢືນໃນພື້ນທີ່ ກະສິກຳອິນ ຊີທັນທີ.

## 13. ການຮຽກຮ້ອງ

ຜູ້ຜະລິດ ແລະ ຜູ້ປະກອບການ ມີສິດຮຽກຮ້ອງ ກ່ຽວກັບ ການປະຕິບັດ ໜ້າທີ່ວຽກງານ ຂອງ ໜ່ວຍງານ ອອກໃບຢັ້ງຢືນ ບໍ່ວ່າຈະເປັນການເຮັດວຽກ ຂອງວິຊາການ ຫຼື ຂອງນັກກວດກາ ລວມ ທັງການຮ້ອງຟ້ອງ ການລະເມີດ ມາດຕະຖານ ຂອງ ຜູ້ຜະລິດ-ຜູ້ປະກອບການ ດ້ວຍການເອງ, ຜູ້ ຮຽກຮ້ອງຕ້ອງເຮັດໜັງສື ສົ່ງໃຫ້ ໜ່ວຍງານອອກໃບຢັ້ງຢືນ ພ້ອມທັງ ແຈ້ງຂໍ້ມູນ ກ່ຽວກັບ ເລື່ອງທີ່ ຮຽກຮ້ອງ ໂດຍລະອຽດ ແລະ ຈະຕ້ອງແຈ້ງຊື່ ແລະ ທີ່ຢູ່ຂອງຜູ້ຮ້ອງຟ້ອງ ເພື່ອຄວາມສະດວກໃນ ການຕິດຕໍ່ປະສານງານ. ໃນກໍລະນີ ໜ່ວຍງານອອກໃບຢັ້ງຢືນ ຕ້ອງການຂໍ້ມູນ ເພີ່ມເຕີມ, ແຕ່ຜູ້ ຮຽກຮ້ອງ ບໍ່ເປີດເຜີຍຊື່ຂອງຕົນເອງ, ໜ່ວຍງານອອກໃບຢັ້ງຢືນ ອາດສະຫງວນສິດ ໃນການກວດກາ ແລະ ພິຈາລະນາ ຄຳຮ້ອງຟ້ອງນັ້ນ.

ຂໍ້ມູນຕ່າງໆ ທີ່ຮ້ອງຟ້ອງຈະຖືກຮັກສາເປັນຄວາມລັບ ສະເພາະ ຜູ້ທີ່ກ່ຽວຂ້ອງ ໃນການສືບສວນ ເທົ່ານັ້ນ ແລະ ຈະບໍ່ມີຜົນດ້ານບວກ ຫລື ລົບ ຕໍ່ການເຮັດວຽກຂອງໜ່ວຍງານ ອອກໃບຢັ້ງຢືນ ໃນ ການກວດກາ ແລະ ອອກໃບຢັ້ງຢືນ ສຳລັບ ຜູ້ຜະລິດ-ຜູ້ປະກອບການ ການທີ່ເຮັດການຮຽກຮ້ອງ.

**14. ຄ່າທຳນຽມການສະໝັກຂໍຢັ້ງຢືນມາດຕະຖານກະສິກຳອິນຊີ.**

ອັດຕາຄ່າທຳນຽມອາດມີການປ່ຽນແປງໄດ້ທຸກປີ ທັງນີ້ຂຶ້ນກັບ ການອະນຸມັດ ຂອງກົມປູກຝັງ ໂດຍອີງໃສ່ລະບຽບ ຂອງກະຊວງ ການເງິນ. ໜ່ວຍງານອອກໃບຢັ້ງຢືນ ຈະແຈ້ງອັດຕາຄ່າທຳນຽມ ໃໝ່ຂອງທຸກປີ.

**ຂັ້ນຕອນການຢັ້ງຢືນກະສິກຳອິນຊີໂດຍສະຫຼຸບມີດັ່ງນີ້:**

1. ເປີດຮັບສະໝັກຂໍຢັ້ງຢືນກະສິກຳອິນຊີ, ຜູ້ສະໝັກ (ຜູ້ຜູ້ຜະລິດ-ຜູ້ປະກອບການ) ຕ້ອງປະກອບແບບຟອມສະໝັກ ແລະ ຂໍ້ມູນ ຕ່າງໆຕາມທີ່ກຳນົດ.
2. ໜ່ວຍງານ ອອກໃບຢັ້ງຢືນ ແຕ່ງຕັ້ງໃຫ້ຜູ້ກວດກາ ໄປກວດກາຟາມ ຫຼື ສະຖານທີ່ປະກອບການ, ນັກກວດກາຈະຕິດຕໍ່ ນັດໝາຍວັນເວລາ ທີ່ຈະໄປກວດກາ ກັບຜູ້ສະໝັກໂດຍກົງ.
3. ຜູ້ກວດກາໄປກວດກາຟາມ ຫລື ສະຖານທີ່ ປະກອບການ.
4. ຫຼັງຈາກກວດກາແລ້ວ ຜູ້ກວດກາຕ້ອງເຮັດບົດລາຍງານ ໃຫ້ໜ່ວຍງານອອກໃບຢັ້ງຢືນ,
5. ໜ່ວຍງານອອກໃບຢັ້ງຢືນ ສົ່ງບົດລາຍງານການກວດກາ ໃຫ້ຄະນະກຳມະການ ພິຈາລະນາອອກໃບຢັ້ງຢືນ, ພິຈາລະນາວ່າຈະໃຫ້ການຢັ້ງຢືນ ຫລື ບໍ.
6. ໜ່ວຍງານອອກໃບຢັ້ງຢືນ ແຈ້ງຜົນການພິຈາລະນາໃຫ້ ຜູ້ສະໝັກຮູ້ວ່າໄດ້ຮັບ ການຢັ້ງຢືນ ຫລື ບໍ່ໄດ້ຮັບການຢັ້ງຢືນ ຖ້າຜ່ານການພິຈາລະນາ ແລະ ອຸນຸມັດ, ຜູ້ສະໝັກຈະໄດ້ຮັບການຢັ້ງຢືນ ແລະມີສິດໃຊ້ກາໝາຍກະສິກຳອິນຊີ.
7. ໃນກໍລະນີ ບໍ່ໄດ້ຮັບການຢັ້ງຢືນ ຜູ້ສະໝັກສາມາດສະເໜີ ຕໍ່ຄະນະກຳມະການພິຈາລະນາອອກໃບຢັ້ງຢືນ, ເພື່ອຂໍໃຫ້ມີການທົບທວນ ຜົນການພິຈາລະນາໄດ້ໂດຍສົ່ງຄຳຮ້ອງ ແລະ ຂໍ້ມູນຫຼັກຖານເພີ່ມເຕີມ ໄປຍັງໜ່ວຍງານ ອອກໃບຢັ້ງຢືນ ເພື່ອຊີ້ແຈງ ຕໍ່ຄະນະກຳມະການທີພິຈາລະນາ ອອກໃບຢັ້ງຢືນ.

ການສະໝັກຂໍການຢັ້ງຢືນກະສິກຳອິນຊີ ຜູ້ຜະລິດ-ຜູ້ປະກອບການ ຕ້ອງສຶກສາຂໍ້ກຳນົດ ການຜະລິດກະສິກຳອິນຊີ ຈາກມາດຕະຖານ ກະສິກຳ ອິນຊີ ຂອງກະຊວງກະສິກ ແລະ ປ່າໄມ ຢ່າງລະອຽດ, ໃນກໍລະນີ ຜູ້ຜະລິດ ຫລື ຜູ້ປະກອບການ ມີຄວາມສົນໃຈ ເງື່ອນໄຂມາດຕະຖານຂໍ້ໃດ, ສາມາດຂຽນຈົດໝາຍ ສອບຖາມໄປຍັງໜ່ວຍງານອອກໃບຢັ້ງຢືນ ຫລື ໃນກໍລະນີ ການຜະລິດເປັນກຸ່ມ ຫລື ຜູ້ຜະລິດ-ຜູ້ປະກອບການ, ສາມາດຕິດຕໍ່ ວິຊາການ ຈາກໜ່ວຍງານອອກໃບຢັ້ງຢືນ ຈັດກອງປະຊຸມວິຊາການ ເພື່ອອະທິບາຍ ລະອຽດ ກ່ຽວກັບ ມາດຕະຖານກະສິກຳອິນຊີ ແລະ ວິທີການປະຕິບັດ ຕ່າງໆ ໃນການສະໝັກ ຂໍການຢັ້ງຢືນກະສິກຳອິນຊີ ຫລື ສາມາດ ຂໍລາຍລະອຽດ ໄດ້ທີ່

ໜ່ວຍງານ ອອກໃບຢັ້ງຢືນ, ກົມປູກຝັງ, ກະຊວງ ກະສິກຳ ແລະ ປ່າໄມ້, ໂທ: 412350, ແຟກ: 412349.